**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 26 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

**ມະຕິ**

**ກອງປະຊຸມສະພາແຫ່ງຊາດ**

**ວ່າດ້ວຍ ການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈໍາປີ 2021 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2022 ຂອງ ສານປະຊາຊົນສູງສຸດ**

- ອີງຕາມ ລັດຖະທໍາມະນູນ ສະບັບປີ 2015, ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງ ກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020, ມາດຕາ 59 ຂໍ້ 03;
- ອີງຕາມ ບົດລາຍງານ ຂອງ ສານປະຊາຊົນສູງສຸດ ສະບັບເລກທີ 433/ສປປສ ລົງວັນທີ 03 ພະຈິກ 2021.

ຜ່ານການພິຈາລະນາຢ່າງເລິກເຊິ່ງ ຂອງ ບັນດາສະມາຊິກສະພາແຫ່ງຊາດ ຕໍ່ ບົດລາຍງານຂອງ ສານປະຊາຊົນສູງສຸດ ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງ ສະພາແຫ່ງຊາດ ຊຸດທີ IX, ວັນທີ 08 ພະຈິກ 2021.

**ກອງປະຊຸມ ຕົກລົງ**

**ມາດຕາ 1 ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ 9 ເດືອນ ປະຈໍາປີ 2021 ແລະ ວຽກງານ 03 ເດືອນທ້າຍປີ 2021 ຂອງ ສານປະຊາຊົນສູງສຸດ**

ກອງປະຊຸມ ສະແດງຄວາມຊົມເຊີຍ ສານປະຊາຊົນສູງສຸດ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນ ລັດຖະທໍາມະນູນ ແລະ ກົດໝາຍ ໃນເງື່ອນໄຂທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນກະທົບຮ້າຍແຮງຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ແຕ່ດ້ວຍຄວາມຮັບຜິດຊອບການເມືອງສູງ ຂອງ ສານປະຊາຊົນສູງສຸດ ໃນ 9 ເດືອນຜ່ານມາ ສາມາດຈັດຕັ້ງປະຕິບັດແຜນວຽກງານຈຸດສຸມ ປີ 2021 ສໍາເລັດໃນຫຼາຍດ້ານ ເປັນຕົ້ນ: ໄດ້ສ້າງ ແລະ ປັບປຸງ ກົດໝາຍ, ນິຕິກໍາໃຕ້ກົດໝາຍ; ປັບປຸງກົງຈັກການຈັດຕັ້ງ, ບັນຈຸສັບຊ້ອນ ຜູ້ພິພາກສາ ແລະ ພະນັກງານຂອງສານ; ຍົກລະດັບທິດສະດີ, ວິຊາສະເພາະ, ຈັນຍາບັນ, ຈັນຍາທໍາ ໃຫ້ຜູ້ພິພາກສາ ແລະ ພະນັກງານຂອງສານ; ປັບປຸງແບບແຜນວິທີເຮັດວຽກ ແລະ ກົນໄກການດໍາເນີນຄະດີ; ພັດທະນາພື້ນຖານໂຄງລ່າງ ແລະ ວັດຖຸເຕັກນິກ ມີຄຸນນະພາບສູງຂຶ້ນ.